ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ສຳນັກງານ ຄຄຂ
1080
27 SEP 2017
ໂທລະສັບ 021 217770

ເລກທີ: 44 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 22 ກັນຍາ 2017

ລາຍງານການເຄື່ອນໄຫວຂອງທະນາຄານແຫ່ງ ສປປ ລາວ
ປະຈຳອາທິດທີ 11-15/09/2017 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ

## I. ວຽກງານການເມືອງແນວຄິດ

ສະພາບການເມືອງແນວຄິດຂອງພະນັກງານພາຍໃນຂະແໜງທະນາຄານມີຄວາມສະຫງົບປົກກະຕິ, ພະນັກງານມີຄວາມອຸ່ນອ່ຽນທຸ່ນທ່ຽງ, ເຊື່ອໝັ້ນຕໍ່ການນຳພາຂອງພັກ-ລັດ, ມີສະຕິເຄົາລົບຕໍ່ການຈັດຕັ້ງ, ລະບຽບກົດໝາຍ ແລະ ຕັ້ງໜ້າປະຕິບັດໜ້າທີ່ວຽກງານຕາມທີ່ໄດ້ຮັບມອບໝາຍຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ.

## II. ການເຄື່ອນໄຫວວຽກງານວິຊາສະເພາະ

### 1. ສະພາບເສດຖະກິດເງິນຕາສາກົນ

#### 1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາສະຫະລັດອ່ອນຄ່າລົງ 1,20% ທຽບເອີໂຣ ເນື່ອງຈາກຕົວເລກເສດຖະກິດຂອງສະຫະລັດອາເມລິກາ ອອກມາບໍ່ດີ ເປັນຕົ້ນແມ່ນຕົວເລກຍອດຂາຍສິນຄ້າຍ່ອຍ ຫຼຸດລົງເປັນ 0,20 ຂອງເດືອນ 08/2017 ຈາກເພີ່ມຂຶ້ນ 0,30 ໃນເດືອນຜ່ານມາ ແລະ ຕົວເລກຜົນຜະລິດພາກອຸດສາຫະກຳ ຫຼຸດລົງ 0,90% ຂອງເດືອນ 08/2017 ຈາກເພີ່ມຂຶ້ນ 0,40% ໃນເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 04-08/09/2017 | ອາທິດນີ້ 11-15/09/2017 | ເປີເຊັນ ແຂງຄ່າ(+) / ອ່ອນຄ່າ(–) |
|---|---|---|---|
| ໂດລາ/ເອີໂຣ | 1,1795 | 1,1938 | -1,20% |
| ເຢນ/ໂດລາ | 109,68 | 111,22 | -1,38% |
| ບາດ/ໂດລາ | 33,240 | 33,09 | 0,45% |
| ເປໂຊ/ໂດລາ | 51,20 | 51,28 | -0,15% |
| ຣູເປັຍ/ໂດລາ | 13.347 | 13.238 | 0,82% |
| ໂດລາສິງກະໂປ/ໂດລາ | 1,3615 | 1,3448 | 1,24% |
| ຢວນ/ໂດລາ | 6,6710 | 6,5411 | 1,99% |

#### 1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

- ລາຄານ້ຳມັນ ເພີ່ມຂຶ້ນ 3,75% ຈາກ 49,09 ໂດລາ/ບາເຣວ ມາເປັນ 50,93 ໂດລາ/ບາເຣວ ເນື່ອງຈາກຄັງສຳຮອງນ້ຳມັນແອັດຊັງຂອງ ສະຫະລັດອາເມລິກາ ຫຼຸດລົງ 8,43 ລ້ານບາເຣວ ຂອງອາທິດທີ 08/09/2017 ໃນອາທິຜ່ານມາ;
- ສຳລັບລາຄາຄຳ ເພີ່ມຂຶ້ນ 3,40% ຈາກ 1.280,25 ໂດລາ/ອອນ ມາເປັນ 1.323,77 ໂດລາ/ອອນ ເນື່ອງຈາກກອງທຶນທີ່ຖືຄອງຄຳ (SPDR) ໄດ້ຊື້ຄຳ ແລະ ສັນຍາຊື້-ຂາຍຄຳ ເພີ່ມຂຶ້ນ 4,14 ໂຕນ ຈາກ 834,50 ໂຕນ ໃນວັນທີ 08/09/2017ເປັນ 838,64 ໂຕນ ໃນວັນທີ 12/09/2017.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,02% ແຕ່ອ່ອນຄ່າລົງ 0,20% ເມື່ອທຽບໃສ່ສະກຸນເງິນບາດ. ທຽບໃສ່ທ້າຍປີຜ່ານມາເຫັນວ່າ ເງິນກີບອ່ອນຄ່າລົງ 0,02% ທຽບໃສ່ສະກຸນເງິນໂດລາ ແລະ ອ່ອນຄ່າລົງ 7,44% ທຽບໃສ່ສະກຸນເງິນບາດ.

| ອັດຕາ | ອາທິດຜ່ານມາ 04-08/09/2017 | | | ອາທິດນີ້ 11-15/09/2017 | | | %ທຽບອາທິດຜ່ານມາ | | | ທຽບທ້າຍປີຜ່ານມາ | | |
|---|---|---|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ | ຊື້ | ຂາຍ | ສະເລັ່ຍ |
| ອັດຕາທະນາຄານ[1] | | | | | | | | | | | | |
| ໂດລາ | 8.328,74 | 8.348,24 | 8.339,42 | 8.327,60 | 8.349,30 | 8.337,58 | 0,01% | -0,01% | 0,02% | -0,13% | 0,06% | -0,02% |
| ບາດ | 252,08 | 253,64 | 252,93 | 252,83 | 253,95 | 253,42 | -0,30% | -0,12% | -0,20% | -7,61% | -7,42% | -7,44% |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາປະຈຳອາທິດນີ້ ເພີ່ມຂຶ້ນ 0,90% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 25,12%;
- ປະລິມານເງິນ M2 ເພີ່ມຂຶ້ນ 0,08% ເມື່ອທຽບໃສ່ອາທິດຜ່ານມາ, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 13,01%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນປະຈຳອາທິດ (08-10/09/2017) ເຫັນວ່າ ທທກ ຂາຍໂດລາສຸດທິ 3,39 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 27,13 ລ້ານໂດລາ ແລະ ຂາຍໂດລາໄດ້ 30,52 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 443,55 ລ້ານບາດ (ໃນນີ້ ຊື້ບາດໄດ້ 149,38 ລ້ານບາດ ແລະ ຂາຍບາດໄດ້ 592,93 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ ເງິນໂດລາເພີ່ມຂຶ້ນ 2,80% ແລະ ເງິນບາດເພີ່ມຂຶ້ນ 13,30%.
- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍເງິນໂດລາສຸດທິ ຈຳນວນ 7,56 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 42 ລ້ານບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ມີປະລິມານຊື້-ຂາຍເງິນໂດລາ ຈຳນວນ 4,11 ລ້ານໂດລາສະຫະລັດ ແລະ ເງິນບາດ ຈຳນວນ 75,47 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ເງິນໂດລາສຸດທິ ຈຳນວນ 0,05 ລ້ານໂດລາ ແຕ່ຂາຍເງິນບາດສຸດທິ ຈຳນວນ 50 ລ້ານບາດ.

1 % ການປ່ຽນແປງຂອງອັດຕາແລກປ່ຽນທະນາຄານທຸລະກິດ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ (ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 01-07/08/2017 | | ອາທິດນີ້ 08-10/09/2017 | | (%) +ເພີ່ມຂຶ້ນ /-ຫຼຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| 1. ການຊື້ເງິນຕາຕ່າງປະເທດ | **25,20** | **92,88** | **27,13** | **149,38** | **7,66%** | **60,83%** |
| - ທ/ຄທຸລະກິດລັດ | 7,35 | 44,31 | 8,69 | 62,39 | 18,23% | 40,80% |
| - ທ/ຄທຸລະກິດອື່ນໆ | 17,85 | 48,57 | 18,44 | 86,99 | 3,31% | 79,10% |
| 2. ການຂາຍເງິນຕາຕ່າງປະເທດ | **30,88** | **562,27** | **30,52** | **592,93** | **-1,17%** | **5,45%** |
| - ທ/ຄທຸລະກິດລັດ | 12,88 | 151,99 | 9,92 | 161,89 | -22,98% | 6,51% |
| - ທ/ຄທຸລະກິດອື່ນໆ | 18,00 | 410,28 | 20,60 | 431,04 | 14,44% | 5,06% |
| ຊື້-ຂາຍສຸດທິ ທທກ | **-5,68** | **-469,39** | **-3,39** | **-443,55** | **-40,32%** | **-5,51%** |
| - ຜິດດ່ຽງ ຊື້-ຂາຍ | -22,54% | -505,37% | -12,50% | -296,93% | -44,54% | -41,25% |
| - ມູນຄ່າການຊື້-ຂາຍ | **56,08** | **655,15** | **57,65** | **742,31** | **2,80%** | **13,30%** |
| 3. ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ | **-8,26** | **-66,80** | **-7,56** | **-42,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 8,26 | 66,80 | 7,56 | 42,00 | | |
| 4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ | **1,05** | **49,00** | **4,11** | **75,47** | | |
| 5. ທຫລ ກັບ ພາກສ່ວນ ອື່ນໆ | **-0,05** | **0,00** | **0,05** | **-50,00** | | |
| -ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,01 | 0,00 | 0,10 | 0,00 | | |
| -ທຫລ ຂາຍໃຫ້ພາກສ່ວນອື່ນໆ | 0,06 | 0,00 | 0,05 | 50,00 | | |

**2.4 ສະພາບອັດຕາເງິນເຟີ້**

ອັດຕາເງິນເຟີ້ໃນເດືອນ 09/2017 ຄາດວ່າຈະຢູ່ໃນລະດັບ 0,32% ເພີ່ມຂຶ້ນຈາກ 0,16% ໃນເດືອນ 08/2017.

**2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ**

ທະນາຄານແຫ່ງ ສປປ ລາວ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເຂົ້າເງິນຕາຕ່າງປະເທດ ໃນອາທິດນີ້ ເພີ່ມຂຶ້ນ 1,640% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 27,27 ລ້ານໂດລາສະຫະລັດທຽບເທົ່າ. ໃນນັ້ນ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ເພີ່ມຂຶ້ນ 135% ທຽບໃສ່ອາທິດຜ່ານມາ ໂດຍມີຈຳນວນ 72,47 ລ້ານໂດລາສະຫະລັດທຽບເທົ່າ.

**3. ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ**

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 797 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 97 ສະບັບ ເທົ່າກັບ 13,85% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 388,12 ຕື້ກີບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 25,86 ຕື້ກີບ ເທົ່າກັບ 7,14% ເມື່ອທຽບໃສ່ອາທິດຜ່ານມາ;

ການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (08-10/09/2017) ມີທັງໝົດ 3.091 ຄັ້ງ ໃນນັ້ນປະກອບດ້ວຍ:

- ສະກຸນເງິນກີບຈຳນວນ 2.988 ຄັ້ງ ລວມມູນຄ່າການໂອນທັງໝົດໃນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າ ຫຼຸດລົງ 14,90 ຕື້ກີບ ຈາກ 898,94 ຕື້ກີບ ມາເປັນ 884,04 ຕື້ກີບ ເທົ່າກັບ 1,65%;

- ກະຊວງການເງິນ: ມີການເຄື່ອນໄຫວຈຳນວນ 103 ຄັ້ງ, ມູນຄ່າການໂອນໃນອາທິດຜ່ານມາ ເຫັນວ່າ ຫຼຸດລົງ 117,26 ຕື້ກີບ ຈາກ 191,34 ຕື້ກີບ ມາເປັນ 74,08 ຕື້ກີບ ເທົ່າກັບ 61,28%.

## 4. ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ.

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.037,14 ຈຸດ ເພີ່ມຂຶ້ນ 0,62% ເມື່ອທຽບໃສ່ອາທິດຜ່ານມາ, ຕະຫຼອດອາທິດນີ້ ມີປະລິມານຊື້-ຂາຍຮຸ້ນທັງໝົດ 24.800 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 128,34 ຕື້ກີບ ຫຼຸດລົງ 8,90% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍ ກວມເອົາ 26,30% ຂອງມູນຄ່າການຊື້-ຂາຍທັງໝົດ.

| ຊື່ | ດັດຊະນີອາທິດທີ 04-08/09/2017 | ດັດຊະນີອາທິດທີ 11-15/09/2017 | %(ເພີ່ມຂຶ້ນ+)/(ຫຼຸດລົງ-) | ໝາຍເຫດ |
|---|---|---|---|---|
| ດັດຊະນີຕະຫຼາດຫຼັກຊັບລາວ | 1.030,72 | 1.037,14 | 0,62 | |

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)** (ຫົວໜ່ວຍມູນຄ່າ 1.000 ກີບ)

| | ອາທິດກ່ອນ | | | ອາທິດນີ້ | | | %ປ່ຽນແປງ | | |
|---|---|---|---|---|---|---|---|---|---|
| ລາຍຊື່ | ຈຳນວນ(ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາສະເລ່ຍ (ກີບ) |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 1.100 | 5.840.000 | 5.309 | 5.400 | 29.030.000 | 5.376 | 390,91 | 397,09 | 67 |
| ບໍລິສັດຜະລິດໄຟຟ້າລາວ ມະຫາຊົນ | 26.400 | 134.435.000 | 5.092 | 19.200 | 97.910.000 | 5.099 | - 27,27 | - 27,17 | 7 |
| ບໍລິສັດລາວເວີນ ມະຫາຊົນ | - | - | 7600 | 200 | 1.400.000 | 7.000 | - | - | - 400 |
| ບໍລິສັດປີໂຕລ້ຽມເທລດດິ້ງລາວ ມະຫາຊົນ | 300 | 600.000 | 2.000 | - | - | 2.000 | - 100 | - 100 | - |
| ບໍລິສັດສຸວັນນີໂຮມເຊັນເຕີ ມະຫາຊົນ | - | - | 3000 | - | - | 3.000 | - | - | - |
| ທັງໝົດ | 27.800 | 140.875.000 | 5.067 | 24.800 | 128.340.000 | 5.175 | - 10,79 | - 8,90 | |

## 3. ວຽກງານອື່ນໆ ທີ່ພົ້ນເດັ່ນ.

- ສຳເລັດການເຂົ້າຮ່ວມກອງປະຊຸມ , ຈັດກອງປະຊຸມ ແລະ ສຳມະນາຕ່າງໆ: ❶ ກອງປະຊຸມສູນກາງພັກ ຄັ້ງທີ 5 ສະໄໝທີ X ທີ່ (ຫ້ອງວ່າການສູນກາງພັກ ຫຼັກ 6); ❷ ກອງປະຊຸມຄະນະປັບປຸງຄວາມເຂັ້ມແຂງຕະຫຼາດທຶນລາວ (TWGs) ທີ່ (ກຄທ); ❸ ກອງປະຊຸມຄົບຄະນະ BASEL ຄັ້ງທີ 2 ທີ່ (ກຄທ); ❹ ກອງປະຊຸມຄະນະກະກຽມ

ຄວາມພ້ອມຕ່າງໆໃຫ້ແກ່ການຈັດກອງປະຊຸມຂອງ ຮອງຜູ້ວ່າການ ທະນາຄານກາງອາຊຽນ ຢູ່ຫຼວງພະບາງ ທີ່ (ທຫລ); ❺ ກອງປະຊຸມປຶກສາຫາລືວຽກການປະເມີນຄວາມສ່ຽງລະດັບຊາດ (NRA) (ຄະນະອານຸ 04,06,09 ແລະ 03) ທີ່ (ທຫລ); ❻ ຈັດກອງປະຊຸມດຳເນີນຊີວິດການເມືອງປັບປຸງປົວແປງພັກຢູ່ບັນດາຮາກຖານພັກທີ່ຂຶ້ນກັບອົງຄະນະພັກ ທຫລ ແລະ ❼ ເຂົ້າຮ່ວມສຳມະນາໃນຫົວຂໍ້ " ລະບົບຂໍ້ມູນຂ່າວສານທີ່ທັນສະໄໝກ່ຽວກັບວຽກງານຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍ" ໃນລະຫວ່າງວັນທີ 11-13 ກັນຍາ 2017;

- ສຳເລັດພິທີເຊັນສັນຍາການໃຫ້ບໍລິການທີ່ປຶກສາເພື່ອປັບປຸງຂັ້ນຕອນການອະນຸມັດສິນເຊື່ອໃຫ້ທັນສະໄໝ ແລະ ສ້າງລະບົບການຈັດອັນດັບສິນເຊື່ອ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ກັບ ບໍລິສັດເອີນແອນຢັງລາວ ຈຳກັດ ທີ່ (ທຄຕລ ສຳນັກງານໃຫຍ່);
- ສຳເລັດການຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ທຫລ ຂອງຄະນະຊ່ຽວຊານຈາກກຸ່ມທະນາຄານໂລກ.

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ທີ່ໄດ້ກຳນົດໄວ້ໃນແຜນວຽກປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ; ສືບຕໍ່ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ; ສືບຕໍ່ຕິດຕາມການຈັດຕັ້ງປະຕິບັດນະໂຍບາຍອັດຕາດອກເບ້ຍຂອງ ທຫລ ແລະ ການສ້າງໂປຼແກຼມຕິດຕາມນະໂຍບາຍດັ່ງກ່າວຢ່າງໃກ້ຊິດ;
- **ກະກຽມຈັດກອງປະຊຸມ ແລະ ເຂົ້າຮ່ວມກອງປະຊຸມຕ່າງໆ:** ❶ ກອງປະຊຸມຄະນະກະກຽມຕິດຕາມທ່ານນາຍົກລັດຖະມົນຕີ ທີ່ຈະເດີນທາງໄປຢ້ຽມຢາມ ສະພັນຣັດເຊຍ ທີ່ (ຫສນຍ); ❷ ກອງປະຊຸມປຶກສາຫາລືຂອງຄະນະຮັບຜິດຊອບແຈ້ງຊັບສິນ ແລະ ລາຍຮັບຂອງພະນັກງານທີ່ຢູ່ຂະແໜງການທະນາຄານ ທີ່ (ທຫລ); ❸ ກອງປະຊຸມຄະນະຮັບຜິດຊອບຮ່າງກົດໝາຍວ່າດ້ວຍ ທະນາຄານແຫ່ງ ສປປ ລາວ ທີ່ (ທຫລ); ❹ ກອງປະຊຸມຮ່ວມລະຫວ່າງທະນາຄານແຫ່ງ ສປປ ລາວ, ກະຊວງໄປສະນີໂທລະຄົມມະນາຄົມ ແລະ ການສື່ສານ ແລະ ກະຊວງການຕ່າງປະເທດເພື່ອປຶກສາຫາລືກ່ຽວກັບຜະລິດຕະພັນທີ່ໃຫ້ການບໍລິການທາງການເງິນອີເລັກໂທນິກ (U-money) ຂອງບໍລິສັດສະຕາໂທລະຄົມ ທີ່ (ກຄສງ) ແລະ ❺ ກອງປະຊຸມເຜີຍແຜ່ກ່ຽວກັບວຽກງານຫຼັກຊັບໃນຫົວຂໍ້ "ຄວາມເຂົ້າໃຈພື້ນຖານກ່ຽວກັບການລົງທຶນໃນຮຸ້ນ" ລະຫວ່າງວັນທີ 20 ກັນຍາ 2017 ທີ່ (ບໍລິສັດລາວໂທລະຄົມ);
- ທ່ານ ຮອງຜູ້ວ່າການ ທຫລ ເດີນທາງໄປເຂົ້າຮ່ວມກອງປະຊຸມກວດກາເນື້ອໃນຮ່າງກົດໝາຍວ່າດ້ວຍລະບົບການຊຳລະ ຮ່ວມກັບ ສະພາແຫ່ງຊາດ ໃນລະຫວ່າງ ວັນທີ 22-23 ກັນຍາ 2017 ທີ່ (ແຂວງ ວຽງຈັນ);
- ຕ້ອນຮັບການເຂົ້າຢ້ຽມຂໍ່ານັບຄະນະຜູ້ວ່າການ ຂອງທະນາຄານພັດທະນາແຫ່ງຊາດຈີນ.

ຫົວໜ້າຫ້ອງການ

ເພັດສະຖາພອນ ແກ້ວວົງວິຈິດ